UNIVERSITÉ DU LUXEMBOURG

LUXEMBOURG AID & DEVELOPMENT

https://cooperationlaos.uni.lu/

# INTER-UNIVERSITY COOPERATION PROJECT LAOS-LUXEMBOURG

## *CALL FOR APPLICATIONS*

## *Research grants (ທຶນຄົ້ນຄວ້າ)*

ມະຫາວິທະຍາໄລລຸກຊໍາບວກ ຍິນດີທີ່ຈະປະກາດວ່າ ພວກເຮົາຈະເປີດຮັບສະໝັກເພື່ອຄັດເລືອກ ພະນັກງານຈາກຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ທີ່ສົນໃຈເຮັດບົດຄົ້ນຄວ້າໃນຂົງເຂດກົດໝາຍ ເພື່ອມາດໍາເນີນການຄົ້ນຄວ້າ ພາຍໃຕ້ການຊີ້ນໍາຂອງ ໂຄງການຮ່ວມມືລະຫວ່າງມະຫາວິທະຍາໄລ ລາວ-ລຸກຊໍາບວກ.

### ເງື່ອນໄຂໃນການສະໝັກ

ທຶນຄົ້ນຄວ້ານີ້ ແມ່ນເນັ້ນໃສ່ ຄູອາຈານລາວ ໃຫ້ພັດທະນາທັກສະໃນທາງດ້ານວິຊາການ ແລະ ທັກສະໃນການຄົ້ນຄວ້າ ໃນຂົງເຂດກົດໝາຍ, ເພື່ອສ້າງຄວາມເຂັ້ມແຂງແກ່ຄວາມອາດສາມາດໃນການຄົ້ນຄວ້າຂອງຕົນເອງ ແລະ ຂອງສະຖາບັນ ອັນໄດ້ແກ່ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດລາວ. ຜູ້ສະໝັກຈະຕ້ອງເປັນອາຈານຂອງຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ, ຢ່າງໜ້ອຍຕ້ອງ ຈົບການສຶກສາລະດັບປະລິນຍາຕີ ໃນສາຂາກົດໝາຍ ຫຼື ມີທັກສະ/ຄວາມຊ່ຽວຊານທາງກົດໝາຍສູງ. ທຶນດັ່ງກ່າວແມ່ນບໍ່ໄດ້ ກໍານົດອາຍຸຜູ້ສະໝັກ. ໂດຍຜູ້ສະໝັກຈະຖືກຄັດເລືອກຕາມຜົນງານທີ່ສົ່ງມາ. ມະຫາວິທະຍາໄລລຸກຊໍາບວກມີສິດເດັດຂາດໃນການຄັດເລືອກ ແລະ ຫຼື ການປະຕິເສດຜູ້ສະໝັກ.

ເພື່ອໃຫ້ເປັນໄປຕາມ "ແຜນຍຸດທະສາດການຮ່ວມມືທົ່ວໄປເພື່ອການພັດທະນາທີ່ຍືນຍົງ ຂອງລຸກຊໍາບວກ - ເສັ້ນທາງສູ່ ປີ 2030", ໂຄງການຮ່ວມມືລະຫວ່າງມະຫາວິທະຍາໄລ ລາວ-ລຸກຊໍາບວກ ເປີດຮັບບົດສະເໜີການຄົ້ນຄວ້າທີ່ນອນໃນຫົວຂໍ້ຕ່າງໆລຸ່ມນີ້:

- ລັດແຫ່ງກົດໝາຍ ແລະ ການປົກຄອງ;
- ສິດທິຂັ້ນພື້ນຖານ;
- ຄວາມເທົ່າທຽມທາງເພດ;
- ຄວາມຍືນຍົງທາງສິ່ງແວດລ້ອມ ແລະ ການປົກປ້ອງດິນຟ້າອາກາດ.

### ການຊີ້ນໍາບົດ

ໂຄງການຈະສະໜອງການຊີ້ນຳການຄົ້ນຄວ້າຕະຫຼອດໄລຍະທາງທຶນ. ຜູ້ທີ່ຖືກຮັບເລືອກຈະໄດ້ຮັບການຊ່ວຍເຫຼືອເພື່ອດຳເນີນການຂຽນບົດຄົ້ນຄວ້າ ແລະ ໄດ້ຮັບການຊີ້ນຳບົດຜ່ານ ການພົບປະເປັນປະຈຳເພື່ອສະເໜີຄວາມຄືບໜ້າຂອງການຄົ້ນຄວ້າ.
ຜູ້ສະໝັກທີ່ຖືກຄັດເລືອກ ຈະຕ້ອງໄດ້ເຂົ້າຮ່ວມບັນດາກິດຈະກຳເພື່ອເສີມສ້າງຄວາມອາດສາມາດ ທີ່ຈັດໂດຍໂຄງການຮ່ວມມືລະຫວ່າງມະຫາວິທະຍາໄລ ລາວ-ລຸກຊຳບວກ (ງານສຳມະນາ, ງານຝຶກອົບຮົມການຄົ້ນຄວ້າ ແລະ ອື່ນໆ) ແລະ ຈະຕ້ອງນຳສະເໜີບົດຄົ້ນຄວ້າຂອງຕົນຕໍ່ສາທາລະນະ ຕາມຄວາມຮຽກຮ້ອງຂອງໂຄງການ. ນອກນີ້, ຍັງຕ້ອງສົ່ງບົດລາຍງານຄວາມຄືບໜ້າທຸກໆ 3 ເດືອນ, ອີງຕາມສັນຍາຄົ້ນຄວ້າ ທີ່ໄດ້ເຊັນໄວ້ກັບທາງມະຫາວິທະຍາໄລລຸກຊຳບວກ.

**ການບໍລິຫານ ແລະ ການເງິນ**

ຜູ້ທີ່ຖືກຄັດເລືອກຈະໄດ້ຮັບທຶນເປັນຈຳເປັນ 1200 EUR ເພື່ອດາເນີນການຄົ້ນຄວ້າໃຫ້ສຳເລັດ.

ທຶນດັ່ງກ່າວ ຈະມອບໃຫ້ໂດຍ ມະຫາວິທະຍາໄລລຸກຊຳບວກ ໂດຍຈະຖືກແບ່ງອອກເປັນ 4 ງວດ. ການເບີກຈ່າຍຂອງມະຫາວິທະຍາໄລລຸກຊຳບວກ ແມ່ນຈະອີງຕາມຜົນງານ ແລະ ຂຶ້ນກັບການປະຕິບັດພັນທະຂອງຜູ້ໄດ້ຮັບທຶນ ທີ່ໄດ້ລະບຸໄວ້ໃນ "ຂໍ້ຕົກລົງຂອງທຶນ" ທີ" ໂດຍສະເພາະ ພັນທະທີ່ຜູ້ໄດ້ຮັບທຶນຈະຕ້ອງສົ່ງບົດລາຍງານຄວາມຄືບໜ້າທຸກໆ 3 ເດືອນ ໃຫ້ແກ່ຜູ້ປະສານງານໂຄງການ ປະຈຳວຽງຈັນ.

ຜູ້ໄດ້ຮັບທຶນ ຈະມີຄວາມຮັບຜິດຊອບເຕັມສ່ວນໃນການບໍລິຫານ-ຈັດງານທຶນທີ່ຕົນເອງໄດ້ຮັບ; ໂດຍໂຄງການຈະບໍ່ມີການສະໜອງທຶນເພີ່ມສຳລັບຄ່າໃຊ້ຈ່າຍເພີ່ມຕື່ມອື່ນໆ.

ຜູ້ໄດ້ຮັບທຶນຈະດຳເນີນການຄົ້ນຄວ້າຢູ່ທີ່ ສປປ ລາວ.

ຜູ້ໄດ້ຮັບທຶນຈະຕ້ອງເຮັດໃຫ້ແນ່ໃຈວ່າຈະດຳເນີນການຄົ້ນຄວ້າໂດຍສອດຄ່ອງກັບຫຼັກການຂອງມະຫາວິທະຍາໄລລຸກຊຳບວກ, ໂດຍສະເພາະ ຈັນຍາບັນການຄົ້ນຄວ້າ ແລະ ການຄັດລອກເອົາຜົນງານຜູ້ອື່ນ ແລະ ອີງໃສ່ ຄູ່ມືແນະນຳກ່ຽວກັບວິທີການຄົ້ນຄວ້າວິທະຍາສາດທາງດ້ານກົດໝາຍ.

ບົດຄົ້ນຄວ້າຈະຢູ່ໃນຮູບແບບຂອງເອກະສານ ທີ່ຖືກຂຽນເປັນພາສາອັງກິດ (ບຸລິມະສິດ) ຫຼື ພາສາລາວກໍໄດ້. ຄວາມຍາວຂອງບົດຄົ້ນຄວ້າໃນຕອນທ້າຍ ແມ່ນຈະຕ້ອງປຶກສາຫາລືຮ່ວມກັນກັບຜູ້ປະສານງານໂຄງການ. ບົດຄົ້ນຄວ້າຈະຕ້ອງສຳເລັດໃນ 1 ປີ ຈາກວັນທີເຊັນສັນຍາຮັບທຶນ, ແລະ ຜົນການຄົ້ນຄວ້າທີ່ຕົກລົງຮ່ວມກັນ.

ຜູ້ສະໝັກຈະສາມາດສະໝັກຮັບທຶນ ຄົ້ນຄວ້າແບບດ່ຽວ/ຄົນດຽວເທົ່ານັ້ນ ບໍ່ສາມາດເຮັດເປັນທີມ ຫຼື ສະຖາບັນໄດ້.

**ການສະໝັກ**

ສຳລັບການສະໝັກນີ້ແມ່ນຖ້າຜູ້ສະໝັກສາມາດເຮັດເປັນພາສາອັງກິດໄດ້ກໍເປັນການດີ ແຕ່ກໍສາມາດສົ່ງເປັນພາສາລາວໄດ້ເຊັ່ນກັນ ເຊິ່ງຕ້ອງປະກອບມີເອກະສານຕ່າງໆຄື:

- Cover Letter(ໜັງສືເພື່ອສະແດງເຈດຈານົງເຖິງເຫດຜົນທີ່ຢາກສະໝັກ ແລະ ເຫດຜົນທີ່ທ່ານສົມຄວນຈະໄດ້ຮັບທຶນ- ບໍ່ໃຫ້ກາຍ 2 ໜ້າ)
- ຊີວະປະຫວັດຫຍໍ້ ໂດຍປະກອບມີຊ່ອງທາງການຕິດຕໍ່ ໂດຍລະອຽດ, ປະສົບການທາງດ້ານວິຊາການ (ວິຊາສອນ, ປະສົບການການຄົ້ນຄວ້າ, ປະກອບການໃນຫຼັກສູດຂອງມະຫາວິທະຍາໄລ ແລະອື່ນໆ);
- ໜັງສືສະເໜີການຄົ້ນຄວ້າ (ບໍ່ກາຍ 3 ໜ້າ ລວມບັນຈະນານຸກົມ) ໜັງສືສະເໜີການຄົ້ນຄວ້າຄວນປະກອບມີ ຄໍາອະທິບາຍຂອງຫົວຂໍ້ການຄົ້ນຄວ້າ (ພາກສະເໜີ), ສົມມຸດຖານການຄົ້ນຄວ້າ, ວັດຖູປະສົງການຄົ້ນຄວ້າ ແລະ ວິທີການຄົ້ນຄວ້າ ແລະ ບັນຈະນານຸກົມ (ສູງສຸດ 15 ເອກະສານ).

ປິດຮັບສະໝັກ: ວັນທີ 24 ກໍລະກົດ 2023

ຜູ້ທີ່ຖືກຄັດເລືອກໃນຮອບທໍາອິດ ຈະຖືກເຊີນເຂົ້າສໍາພາດ.

ສົ່ງເອກະສານການສະໝັກຕ້ອງສົ່ງມາຫາ Paulina BASCHTON: paulina.baschton@ext.uni.lu
ແລະ Patthanaphone NAMMALATH: patthanaphone.nammalath@ext.uni.lu

ທ່ານສາມາດເຂົ້າເບິ່ງ ບົດຮຽນອອນລາຍກ່ຽວກັບວິທີການຄົ້ນຄວ້າວິທະຍາສາດທາງດ້ານກົດໝາຍ ເພື່ອເລີ່ມການອອກແບບ ແລະ ດໍາເນີນການຄົ້ນຄວ້າທາງດ້ານກົດໝາຍຢ່າງມີປະສິດທິພາບ